# ຄວາມທະນົງໂຕ ກັບ ຄວາມອ່ອນນ້ອມຖ່ອມໂຕ



ບົດຮຽນທີ 3 ສຳລັບສະບາໂຕທີ 18 ເມສາ 2026


“ເພາະວ່າທຸກຄົນທີ່
ຍົກຕົວຂຶ້ນ ຈະຕ້ອງ
ຖືກຖອຍລົງ ແລະ ຜູ້
ທີ່ຖ່ອມຕົວລົງ ຈະໄດ້
ຮັບການຍົກຂຶ້ນ”
(ລກ 14:11,)

ສິ່ງໃດທີ່ມີຄ່າໃນໂຕຂອງຂ້ອຍ? ນັ້ນແມ່ນຄຳຖາມຍາກ ທີ່ຈະຕອບ

ຖ້າວ່າຂ້ອຍຕອບຫລາຍ (ສະແດງເຖິງຄວາມພູມໃຈ), ຂ້ອຍຍອມຮັບວ່າ ທຸກໆ ສິ່ງທີ່ຂ້ອຍເປັນ ແລະ ທຸກສິ່ງທີ່ຂ້ອຍມີ ແມ່ນໄດ້ມາຈາກໂຕເອງ

ແລ້ວຖ້າຂ້ອຍບອກວ່າ ເພາະພຣະເຈົ້າຊົງນັບຂ້ອຍເປັນບຸດຂອງພຣະອົງເດ?

ຖ້າວ່າຂ້ອຍບໍ່ເວົ້າຫຍັງ (ສະແດງເຖິງຄວາມອ່ອນນ້ອມຖ່ອມໂຕ), ຂ້ອຍ ຍອມຮັບວ່າ ທຸກໆສິ່ງທີ່ຂ້ອຍໄດ້ມານັ້ນແມ່ນມາຈາກພຣະເຈົ້າ.

ແລ້ວຖ້າວ່າຂ້ອຍບໍ່ເວົ້າຫຍັງເພາະວ່າຂ້ອຍບໍ່ຮູ້ຈະພາກພູມໃຈໃນໂຕເອງ ແນວໃດເດ?



## ຕົວຢ່າງຂອງການຍິ່ງສະໂຍ



ລູຊີເຟີ



ສາວົກຂອງພຣະເຢຊູຄຣິດ

## ຕົວຢ່າງຂອງການຖ່ອມໂຕ



ຄົນເກັບພາສີ



ໂມເຊ



ພຣະເຢຊູ, ຜູ້ສົມບູນຂອງແບບຢ່າງ

# ແບບຢ່າງຂອງການຍິ່ງສະໂຍ

# ລູຊີເຟີ

“ເພາະສາລະພັດທີ່ມີຢູ່ໃນໂລກຄືຕັນຫາຂອງເນື້ອກາຍ, ຕັນຫາຂອງຕາ ແລະ ຄວາມອວດອ້າງເປົ່າໆໃນຊີວິດນີ້ ບໍ່ໄດ້ເກີດມາຈາກພຣະບິດາເຈົ້າ ແຕ່ເກີດມາຈາກໂລກ” (1 ຢຮ 2:16)



ຖ້າເຮົາເວົ້າໂດຍຍິ່ງສະໂສ, ພວກເຮົາກໍ່ໄດ້ກ່າວຕາມຜູ້ທີ່ເວົ້າແບບນີ້ມາກ່ອນ ນັ້ນກໍ່ຄື: ລູຊີເຟີ. ລາວໄດ້ເລືອກທີ່ຈະບໍ່ພໍໃຈກັບຕຳແໜ່ງຂອງລາວ, ແຕ່ຕ້ອງການທີ່ຈະຢູ່ໃນລະດັບທີ່ສູງກວ່າ. ໃນເວລານັ້ນ, ລາວປາຖະໜາທີ່ຈະຖືກຍົກສູງຂຶ້ນ ເພື່ອຈະໄດ້ນັ່ງເທິງບັນລັງຂອງພຣະເຈົ້າ (ອຊຢ 14:12-14).

ພວກເຮົາມີ “ນໍຣະດົກ” ທີ່ເປັນ ຄວາມປາຖະໜາທີ່ຈະເຮັດຕາມໃຈມັກ, ເພື່ອທີ່ຈະຄອບຄອງສິ່ງທີ່ພວກເຮົາຕ້ອງການ, ແລະ ເພື່ອທີ່ຈະໄດ້ຮັບຕຳແໜ່ງເພື່ອເຮັດໃຫ້ພວກເຂົາມີຊັບສິນຫລາຍຂຶ້ນ. ນັ້ນແມ່ນສິ່ງທາງໂລກໄດ້ມອບໃຫ້ແກ່ພວກເຮົາ ! (1 ຢຮ 2:16).



ແຕ່ບໍ່ແມ່ນທຸກຄວາມໄຝ່ຝັນຈະເປັນຄວາຍິ່ງຍະໂສ, ຄວາມພໍໃຈທີ່ໄດ້ຈາກຄວາມສຳເລັດຂອງລູກ ຫລື ໄດ້ຈາກຄວາມກະຕືລືລົ້ນ ບໍ່ໄດ້ໝາຍຄວາມວ່າຈະເປັນການຍິ່ງສະເໝີໄປ.

ແຕ່ສິ່ງສຳຄັນທີ່ພວກເຮົາຄວນຈື່ກໍ່ຄື ຊັບສິນ, ທັກສະ, ແລະ ຄວາມສຳເລັດນັ້ນບໍ່ໄດ້ເປັນໂຕກຳນົດຄຸນຄ່າແກ່ພວກເຮົາ. ຄວາມຍິ່ງຍະໂສແມ່ນການທີ່ບໍ່ໄດ້ຖວາຍກຽດຕິຍົດໃຫ້ແກ່ພຣະເຈົ້າ ສຳລັບທີ່ພຣະອົງໄດ້ກະທຳ ຫລື ມອບໃຫ້ແກ່ພວກເຮົາ



# ສາວົກຂອງພຣະເຢຊູ

"ແລ້ວກໍ່ມີການໂຕ້ຖຽງກັນເກີດຂຶ້ນ ໃນທ່າມກາງພວກສາວົກວ່າ ໃນພວກເພິ່ນ ຜູ້ໃດຈະເປັນໃຫຍ່ກວ່າໝູ່" (ລກ 22:24)



ພວກເຂົາໄດ້ໃຊ້ເວລາຫລາຍວ່າ 3 ປີກັບພຣະເຢຊູ. ພຣະອົງຫາກໍ່ໄດ້ລ້າງຕີນຂອງພວກເຂົາ ແລະ ກໍ່ໄດ້ບອກພວກເຂົາເຖິງພຣະໂລຫິດຂອງພຣະອົງນັ້ນໄດ້ຫລັ່ງອອກເພື່ອທຸກຄົນ. ໃນຂະນະທີ່ພວກເຂົາຮັບປະທານອາຫານ, ການສົນທະນາຂອງພວກເຂົາບໍ່ມີຄວາມໝາຍຫຍັງທັງໝົດກັບສິ່ງນີ້: ວ່າ ຜູ້ໃດຈະເປັນໃຫຍ່ທີ່ສຸດ? (ລກ 22:24).

ຄວາມຍິ່ງຍະໂສຂອງພວກເຂົານຳໃຫ້ພວກເຂົາເຊື່ອວ່າ ພວກເຂົາສາມາດເປັນຄົນທີ່ສູງທີ່ສຸດ. ພວກເຂົາບໍ່ເຂົ້າໃຈເຖິງຄວາມສຳຄັນຂອງຄວາມຮູ້ສຶກຂອງພວກເຂົາເອງ. ພວກເຂົາໄດ້ຍູ້ພຣະອົງອອກໄປຈາກຫົວໃຈຂອງພວກເຂົາ ຍ້ອນຄວາມຍິ່ງສະໂສ







ພຣະເຢຊູໄດ້ຊີ້ເຂົ້າປະເດັນໂດຍກົງ: "ແຕ່ເຮົາຢູ່ທ່າມກາງພວກເຈົ້າດັ່ງຄົນຮັບໃຊ້ຜູ້ໜ ◌ິ◌່ງ" (ລກ 22:27). ໃນອີກຄຳເວົ້າໜຶ່ງ: ຖ້າວ່າພວກເຈົ້າຢາກເປັນໃຫຍ່ໃນທ່າມກາງພວກເຈົ້ານັ້ນ ໃຫ້ເປັນດັ່ງຄົນຮັບໃຊ້

ຄວາມຍິ່ງຍະໂສບອກພວກເຮົາວ່າ ພວກເຮົາສົມຄວນໄດ້ຮັບການຮັບໃຊ້ຈາກຄົນອື່ນ (ພວກເຮົາດີກວ່າເຂົາ). ສະນັ້ນ, ພວກເຮົາຕ້ອງການພຣະຄຸນຂອງພຣະເຈົ້າເພື່ອທີ່ຈະໄດ້ກາຍມາເປັນຜູ້ຮັບໃຊ້ທີ່ຖ່ອມໂຕ.

# ຕົວຢ່າງຂອງການຖ່ອມໃຈ

# ຄົນເກັບພາສີ

"ສ່ວນຄົນເກັບພາສີນັ້ນຢືນຢູ່ຫ່າງໄກ ແລະ ບໍ່ກ້າແມ່ນແຕ່ເງີຍໜ້າຂຶ້ນສູ່ຟ້າ, ແຕ່ລາວໄດ້ຕີເອິກຂອງຕົນ, ແລະກ່າວວ່າ. ຂ້າພະເຈົ້າຂໍຊົງໂຜດເມດຕາຂ້ານ້ອຍ ຜູ້ເປັນຄົນບາບແດ່ທ້ອນ' " (ລກ 18:13)

ຄົນຟາລິຊາຍຫາກໍ່ໄດ້ເວົ້າຕໍ່ພຣະເຈົ້າເຖິງສິ່ງທີ່ດີທີ່ລາວໄດ້ເຮັດ ຕໍ່ສະຫວັນ, ແຕ່ພຣະເຢຊູຊົງກ່າວຕໍ່ສິ່ງນັ້ນວ່າ."ເປັນການອະທິຖານສໍາລັບຕົນເອງ," ບໍ່ແມ່ນຕໍ່ພຣະເຈົ້າ (ລກ 18:11-12). ນີ້ແມ່ນຕົວຢ່າງທີ່ສົມບູນຊັດເຈນຂອງຄວາມຍິ່ງ





ຄົນເກັບພາສີໄດ້ອະທິຖານຫາພຣະເຈົ້າໃຫ້ຊ່ວຍເຫລືອ ສໍາລັບທີ່ລາວເປັນຄົນບາບ (ລກ 18:13). ໂດຍຖ່ອມຕົວຂອງລາວຕໍ່ໜ້າພຣະອົງ "ເມື່ອລາວກັບໄປບ້ານລາວກໍ່ນັບວ່າເປັນຄົນຊອບທໍາຫລາຍກວ່າຄົນອື່ນ," ເພາະວ່າ "ຜູ້ທີ່ຍົກໂຕເອງສູງຂຶ້ນຈະຖືກເຮັດໃຫ້ຕໍ່າລົງ, ແລະ ຜູ້ທີ່ຖ່ອມໂຕລົງຈະເຮັດໃຫ້ສູງຂຶ້ນ" (ລກ 18:14).

ການຖ່ອມໂຕທີ່ແທ້ຈິງນັ້ນແມ່ນການຍອມຮັບເອົາຄວາມບາບຂອງພວກເຮົາ ແລະ ຂໍໃຫ້ພຣະອົງຊ່ວຍເຫລືອ. ຈາກນັ້ນ...

- ພວກເຮົາຈະບໍ່ດູຖູກຄົນອື່ນ ຫລື ດ້ອຍຄ່າພວກເຂົາ (ຟລປ. 2:3)
- ພວກເຮົາຈະບໍ່ຊອກຫາຊື່ສຽງຈາກຜູ້ຄົນ (ລກ 14:7-11)
- ແຕ່ພວກເຮົາຈະໄດ້ຮັບຊື່ສຽງຈາກຜູ້ຄົນ ເອງ (ສພສ 27:2)
- ພວກເຮົາຈະໄດ້ຮັບພຣະຄຸນຂອງພຣະເຈົ້າ (ຢກບ 4:6)
- ພວກເຮົາຈະແບ່ງປັນພຣະຄຸນນັ້ນໃຫ້ກັບຄົນອື່ນ (1 ປຕ 4:10)



“ເພາະໂມເຊມີຄວາມເຊື່ອແບບນີ້ ເມື່ອໃຫຍ່ມາແລ້ວ ເພິ່ນບໍ່ຍອມໃຫ້ຜູ້ໃດເອີ້ນຕົນວ່າ ເປັນບຸດຂອງລູກສາວຂອງກະສັດຟາໂຣ.” (ຮຣ 11:24-25)

# ໂມເຊ






ໂມເຊໄດ້ຖືກຝຶກຝົນເພື່ອໃຫ້ເປັນກະສັດຟາໂຣຄົນຕໍ່ໄປ. ລາວມີແຜນການອັນຍິ່ງໃຫຍ່ ແລະມີຄວາມສາມາດສະຫລາດຫລັກແຫລມ (ກຈກ 7:22). ໃນຊ່ວງອາຍຸ 40 ປີ, ລາວໄດ້ຕັດສິນໃຈລະຖິ້ມທຸກສິ່ງ ແລະ ເຂົ້າຮ່ວມກັບຊົນຊາດຂອງລາວ (ເຮັບເຣີ 11:24-25).




ລາວເປັນຜູ້ປົດປ່ອຍ! ດ້ວຍກຳລັງອັນຊົງພະລັງຈະຊ່ວຍພີ່ນ້ອງຂອງລາວ! ນັ້ນເປັນຄວາມຜິດພາດຢ່າງໃຫຍ່. ພຣະເຈົ້າບໍ່ສາມາດໃຊ້ລາວໄດ້ ໃນຂະນະທີ່ລາວໄດ້ມີຄວາມພູມໃຈໃນຕົນເອງ.



ໃນອີກ 40 ປີຕໍ່ມາທີ່ລາວໃຊ້ຊີວິດຢູ່ກັບພຣະເຈົ້າທີ່ທະເລຊາຍ ເຮັດໃຫ້ລາວກາຍເປັນຄົນຖ່ອມໂຕເອງຫລາຍ (ຈຊບຊ 12:3). ຕອນນີ້ພຣະເຈົ້າສາມາດໃຊ້ລາວເພື່ອສົ່ງໄພພິບັດ, ຂ້າມທະເລ, ຮັບພຣະບັນຍັດສິບປະການ, ໂອ້ລົມກັບພຣະເຈົ້າໂດຍກົງ, ໃຊ້ໄມ້ເທົ້າເຄາະຫີນ... ລາວຍັງສາມາດຍອມຮັບການລົງໂທດສຳລັບການກະທຳທີ່ຍິ່ງຂອງລາວແບບຖ່ອມໂຕ, ແລະ ຮັບເອົາຄວາມດີງາມທີ່ລາວໄດ້ເຮັດພ້ອມ. (ຈຊບຊ 20:10-12).

ຕົວຢ່າງຂອງໂມເຊສະແດງໃຫ້ພວກເຮົາເຫັນວ່າ ຄວາມອ່ອນນ້ອມຖ່ອມໂຕ ບໍ່ໄດ້ເກີດຂຶ້ນເອງໃນໂຕຂອງພວກເຮົາ ແຕ່ຕ້ອງຂໍໃຫ້ພຣະເຈົ້າຊົງປະທານໃຫ້ໃນແຕ່ລະມື້

# ພຣະເຢຊູຄຣິດ, ຕົວຢ່າງທີ່ສົມບູນແບບ

"ແລະເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງ. ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ ຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ.!" (ຟລປ 2:8)







ບໍ່ມີໃຜໃນໂລກນີ້ເຄີຍມີ—ແລະຈະບໍ່ມີໃຜເຄີຍມີ—ຄວາມຍິ່ງໃຫຍ່ທີ່ພຣະເຢຊູຊົງມີກ່ອນການລົງມາເກີດເປັນມະນຸດ. ແຕ່ພຣະອົງຊົງສະຫລະທຸກສິ່ງເພື່ອຄວາມຮັກທີ່ມີຕໍ່ພວກເຮົາ, ເມື່ອຜະເຊີນກັບຄວາມຕໍ່າຕ້ອຍແບບນັ້ນ ທຸກສິ່ງທີ່ພວກເຮົາມີ, ທຸກສິ່ງທີ່ພວກເຮົາເປັນ ຫລື ທຸກສິ່ງທີ່ພວກເຮົາສາມາດຈະເປັນໄດ້ໃນອະນາຄົນ ລ້ວນແຕ່ດ້ອຍຄ່າລົງໄປ ເມື່ອທຽບກັບພຣະອົງ.

ພຣະເຢຊູຊົງສະຫລະສະຫວັນເພື່ອຍອມຕາຍເພື່ອມະນຸດ, ດ້ວຍຄວາມຫວັງວ່າພວກເຮົາຈະເຂົ້າໃຈການກະທຳແຫ່ງພຣະຄຸນຂອງພຣະອົງ ແລະ ຍອມຮັບຄຳເຊີນເພື່ອທີ່ຈະໄດ້ມີຄວາມສຳພັນກັບພຣະອົງ. (ຟລປ. 2:5-8). ພຣະອົງຊົງເປັນແບບຢ່າງທີ່ສົມບູນ ໂດຍບໍ່ຕ້ອງສົງໄສເລີຍ.



"ຈົ່ງມີຈິດໃຈເຊັ່ນນີ້ໃນພວກທ່ານ ເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ" (ຟລປ 2:5).

ແລະ ປະຕິບັດຕາມແບບຢ່າງຂອງພຣະອົງ "ຢ່າເຮັດສິ່ງໃດໃນທາງຊິງດີຫລືຖືດີກັນ, ແຕ່ຈົ່ງຖ່ອມໃຈລົງ ຖືວ່າຄົນອື່ນດີກວ່າຕົນ. ຢ່າໃຫ້ຜູ້ໃດເຫັນແກ່ຜົນປະໂຫຍດຂອງຕົນແຕ່ຝ່າຍດຽວ, ແຕ່ຈົ່ງຄິດເຖິງຜົນປະໂຫຍດຂອງຄົນອື່ນດ້ວຍ." (ຟລປ 2:3-4).

Psalm 138 NIV

“ຂ້າແດ່ພຣະເຈົ້າຢາເວ ຂ້ານ້ອຍໂມທະນາຂອບພຣະຄຸນພຣະອົງດ້ວຍສຸດໃຈ
ຂ້ານ້ອຍຮ້ອງເພງຍ້ອງຍໍສັນລະເສີນພຣະອົງ ຕໍ່ໜ້າບັນດາພະທັງຫຼາຍ.
ຂ້ານ້ອຍຂາບລົງຫັນໜ້າໃສ່ພຣະວິຫານອັນບໍຣິສຸດຂອງພຣະອົງ ແລະ
ຍ້ອງຍໍສັນລະເສີນພຣະນາມຂອງພຣະອົງ ເພາະຄວາມຮັກອັນໝັ້ນຄົງແລະ
ຄວາມສັດຊື່ຂອງພຣະອົງ ເພາະພຣະນາມແລະຖ້ອຍຄຳຂອງພຣະອົງເປັນ
ທີ່ເທີດທູນຢ່າງສູງສົ່ງ. ເມື່ອຮ້ອງຫາພຣະອົງກໍຕອບໂດຍໃຫ້ຂ້ານ້ອຍ ມີ
ເຫື່ອແຮງດ້ວຍກຳລັງແລະຣິດອຳນາດຂອງພຣະອົງ. ຂ້າແດ່ພຣະເຈົ້າຢາເວ
ກະສັດທັງຫລາຍໃນໂລກຈະຍົກຍໍພຣະອົງ ເພາະພວກເຂົາໄດ້ຍິນເຖິງຖ້ອຍ
ຄຳທັງຫຼາຍແຕ່ປາກຂອງພຣະອົງ. ພວກເຂົາຈະຮ້ອງເພງເຖິງກິດຈະການທີ່
ພຣະເຈົ້າຢາເວໄດ້ຊົງກະທຳ ແລະເຖິງສະຫງ່າຣາສີອັນຍິ່ງໃຫຍ່ຂອງພຣະ
ເຈົ້າຢາເວ. ເຖິງວ່າຢູ່ທີ່ສູງສຸດ ພຣະເຈົ້າຢາເວກໍເຝົ້າເບິ່ງຜູ້ທີ່ຖ່ອມໃຈ ເຖິງ
ວ່າຢູ່ໄກແສນໄກ ພຣະອົງກໍເຫັນຄົນຈອງຫອງໄດ້. ເມື່ອຄວາມເດືອດຮ້ອນ
ອ້ອມຮອບຂ້ານ້ອຍ ພຣະອົງກໍຮັກສາຂ້ານ້ອຍໃຫ້ປອດໄພໄດ້. ພຣະອົງ
ຂັດຂວາງສັດຕູຜູ້ໂຫດຮ້າຍໃຈອຳມະຫິດ ແລະຊ່ວຍໃຫ້ຂ້ານ້ອຍພົ້ນໄພ
ດ້ວຍຣິດອຳນາດຂອງພຣະອົງ. ຂ້າແດ່ພຣະເຈົ້າຢາເວ ພຣະອົງຈະກະທຳ
ທຸກສິ່ງຕາມທີ່ໄດ້ສັນຍາ ຄວາມຮັກໝັ້ນຄົງຂອງພຣະອົງດຳລົງຢູ່ສືບໄປ
ເປັນນິດ. ຂໍຈົ່ງດຳເນີນພຣະຣາຊກິດຂອງພຣະອົງໃຫ້ສຳເລັດຄົບຖ້ວນສາ
ຊຶ່ງພຣະອົງໄດ້ເລີ່ມດ້ວຍສີມືຂອງພຣະອົງນັ້ນ.”

ເພງ^ສັນລະເສີນ 138:1-8



“ໃນການຮັກຕົນເອງ, ການຍົກຍ້ອງຕົນເອງ ແລະ ຄວາມຍິ່ງຍະໂສນັ້ນ ມີຄວາມອ່ອນແອຢ່າງຫລາຍ, ແຕ່ໃນຄວາມຖ່ອມໂຕນັ້ນ ມີຄວາມເຂັ້ມແຂງຢ່າງຫລາຍ. ສັກສີທີ່ແທ້ຈິງຂອງພວກເຮົານັ້ນບໍ່ໄດ້ດຳຣົງຢູ່ ເມື່ອພວກເຮົາຄິດເຖິງແຕ່ຕົນເອງ, ແຕ່ເມື່ອພຣະເຈົ້າຢູ່ໃນຄວາມຄິດຂອງພວກເຮົາທັງໝົດ ແລະ ຫົວໃຈຂອງພວກເຮົາປ່ຽມລົ້ນດ້ວຍຄວາມຮັກຕໍ່ພຣະຜູ້ໄຖ່ ແລະ ຮັກເພື່ອນມະນຸດ. ຄວາມລຽບງ່າຍໃນອຸປະນິໄສ ແລະ ຄວາມອ່ອນນ້ອມຖ່ອມຕົນ ຈະນຳມາເຊິ່ງຄວາມສຸກ. ໃນຂະນະທີ່ຄວາມຍິ່ງຍະໂສ ຈະນຳມາເຊິ່ງຄວາມບໍ່ພໍໃຈ, ຄວາມໂສກເສົ້າ ແລະ ຄວາມຜິດຫວັງຢ່າງຕໍ່ເນື່ອງ. ການຮຽນຮູ້ທີ່ຈະຄິດເຖິງຕົນເອງໜ້ອຍລົງ ແລະ ຄິດເຖິງການເຮັດໃຫ້ຜູ້ອື່ນມີຄວາມສຸກຫລາຍຂຶ້ນ ຈະນຳມາເຊິ່ງຄວາມເຂັ້ມແຂງຈາກພຣະເຈົ້າໃຫ້ແກ່ພວກເຮົາ.”

EGW (Testimonies for the Church, vol. 3, p. 476)